

# ການປົກປ້ອງຊຸມຊົນ
# ການປ້ອງກັນພະຍາດມາລາເລຍ

ຫົນທາງສູ່ຄວາມຜາສຸກ ໃນພາກພື້ນອາຊີຕະເວັນອອກສຽງໃຕ້


ອົງການກາແດງລາວ
Lao Red Cross

International Federation
of Red Cross and Red Crescent Societies
**Saving lives, changing minds.**



ອ້າຍຕົ໊ນ,
ເຈົ້າກຳລັງເບິ່ງຫຍັງຢູ່ຫັ້ນ?
ເບິ່ງອັນນີ້ເດະ !!! ໂຕຂີດໆງໍໆ
ມັນອອກມາຈາກໄຂ່ໃນນໍ້າ
...ມັນຄືໜອນຍຸງ
ຈັກໜ່ອຍມັນກະຊິກາຍມາເປັນຍຸງ
...ເຊິ່ງຍຸງພວກນີ້ສາມາດນຳເຊື້ອມາລາເລຍມາສູ່ເຈົ້າໄດ້
ຖ້າຍຸງໂຕທີ່ມີເຊື້ອມາກັດເຈົ້າ
ເພາະສະນັ້ນ, ຖ້າຍຸງມາຈາກນໍ້າ...
...ສະນັ້ນເຮົາຄວນຖອກນໍ້າເປື້ອນທີ່ມີກິ່ນເໝັນຖິ້ມ
ຈາກທຸກສິ່ງທີ່ຂັງນໍ້າຢູ່ອ້ອມແອ້ມເຮືອນຂອງພວກເຮົາ
ອ້າຍຕົ໊ນຮູ້ບໍ່ ຈະເກີດຫຍັງຂຶ້ນຖ້າເຈົ້າເປັນໄຂ້ມາລາເລຍ?
ທຸກຄົນສາມາດເປັນໄດ້ພະຍາດນີ້ໄດ້.
ຮູ້ບໍ່ນ້ອງ, ອາການທຳອິດແມ່ນ
ເຈົ້າຈະເປັນໄຂ້ຈາກນັ້ນອາດ
ມີອາການອື່ນໆນຳເຊັ່ນ:
ເຈັບຫົວ
ປວດຂໍ້ກະດູກ
ປວດຮາກ
ເບື່ອອາຫານ
ຊັກ


ການກວດຫາພະຍາດມາລາເລຍກໍ່ບໍ່ແມ່ນເລື່ອງຍາກ,
ແຕ່ເຈົ້າຕ້ອງໄປຫາໝໍຢູ່ສຸກສາລາ ເວລາທີ່ເຈົ້າຮູ້ສຶກເປັນໄຂ້
ພວກເຂົາມີຢາທີ່ຈະເຮັດໃຫ້ອາການຂອງ
ເຈົ້າດີຂຶ້ນ ຖ້າເຈົ້າໄປພົບໝໍໃນທັນທີ.
ບາດນີ້ມາເບິ່ງນຳກັນວ່າ ມີຫຍັງແດ່ທີ່ພວກ
ເຮົາສາມາດເຮັດໄດ້ ເພື່ອປ້ອງກັນບໍ່ໃຫ້ຍຸງກັດ
ພໍ່ແມ່ໃຫ້ຂ້ອຍນອນໃນມຸ້ງ ເພື່ອປ້ອງກັນບໍ່ໃຫ້ຍຸງກັດຂ້ອຍ...
...ມຸ້ງຈະປ້ອງກັນບໍ່ໃຫ້ຍຸງເຂົ້າມາກັດພວກເຮົາເວລາທີ່ພວກເຮົານອນຫຼັບຢູ່
ເບິ່ງແມ້, ຢູ່ປ່ອງຢ້ຽມນີ້ກະມີ
ຕາໜ່າງກັນບໍ່ໃຫ້ຍຸງເຂົ້າມາໃນເຮືອນ.
ປ່າໂທ້...ກິ່ນອີ່ຫຍັງ
ຄືກິ່ນຕີນອີ່ພໍ່ເລີຍ
ອ້າ, ກິ່ນຢາອູດຍຸງ ຍຸງມັນບໍ່ມັກກິ່ນນີ້
ເວລາມັນໄດ້ກິ່ນ ມັນຈະບິນໜີໄປບ່ອນອື່ນ
ຂ້ອຍມັກກິ່ນຂອງຢາສີດຍຸງນີ້
ແຕ່ວ່າພວກຍຸງຊັງກິ່ນນີ້ ແລະ ມັນກໍ່ບໍ່ມາໃກ້.
ໃກ້ຈະມືດແລ້ວຈັກໜ້ອຍຍຸງຊິກັດ ຮີບສີດຢາກັນຍຸງໄວ
ແລະ ຖ້າຍຸງ
ມັນບໍ່ເຫັນຜິວໜັງເຮົາ
ມັນກໍ່ບໍ່ສາມາດກັດເຮົາໄດ້
ມາລອງເບິ່ງກັນເທາະ
ວ່າເຮົາຊິໄປໄດ້ໄກປານໃດ ໂດຍທີ່ບໍ່ຖືກຍຸງກັດ

ດ້ານລຸ່ມນີ້ແມ່ນບັນຊີລາຍການສິ່ງທີ່ຕ້ອງຈື່ຈໍາກ່ຽວກັບພະຍາດມາລາເລຍ. ຈົ່ງສຶກສາມັນໃຫ້ດີ, ຄໍາແນະນໍາເຫຼົ່ານີ້ສາມາດສ້າງຄວາມແຕກຕ່າງ ສໍາລັບຕົວທ່ານເອງ ແລະ ຄອບຄົວຂອງທ່ານໄດ້!

- ມາລາເລຍຄືພະຍາດຊະນິດໜຶ່ງທີ່ແຜ່ເຊື້ອໂດຍການຖືກຍຸງທີ່ມີເຊື້ອກັດ
- ທຸກຄົນແມ່ນມີຄວາມສ່ຽງຕໍ່ການເປັນພະຍາດມາລາເລຍ. ແມ່ມານ ແລະ ເດັກນ້ອຍອາຍຸຕໍ່າກວ່າ 5 ປີ ແມ່ນເປັນກຸ່ມທີ່ມີຄວາມສ່ຽງສູງສຸດທີ່ຈະເສຍຊີວິດຈາກພະຍາດດັ່ງກ່າວ
- ອາການໂດຍທົ່ວໄປຂອງມາລາເລຍກໍ່ຄືມີໄຂ້ ແຕ່ວ່າອາດມີອາການອື່ນໆລວມຢູ່ນໍາເຊັ່ນ:
  - ເຈັບຫົວ
  - ປວດຂໍ້ກະດູກ
  - ຮາກຢ່າງຮຸນແຮງ
  - ເບື່ອອາຫານ
  - ມີອາການຊັກ
- ການປິ່ນປົວທີ່ທັນເວລາສາມາດປ້ອງກັນການເສຍຊີວິດໄດ້. ໃຜກໍຕາມທີ່ມີໄຂ້ຈະຕ້ອງໄດ້ຮັບການປິ່ນປົວ ຈາກແພດພາຍໃນ 24 ຊົ່ວໂມງ. ຜູ້ທີ່ມີເຊື້ອມາລາເລຍຈະຕ້ອງໄດ້ຮັບການຮັກສາຕາມຂັ້ນຕອນໃຫ້ຖືກຕ້ອງ ແລະ ຄົບຖ້ວນ.
- ໃຫ້ນອນໃນມຸ້ງຍ້ອມນໍ້າຢາ (LLINs) ຈະຊ່ວຍໃຫ້ສາມາດຫຼຸດຜ່ອນໂອກາດຖືກຍຸງທີ່ມີເຊື້ອມາລາເລຍກັດ
- ເຈົ້າຍັງສາມາດປ້ອງກັນບໍ່ໃຫ້ຖືກຍຸງກັດໄດ້ດ້ວຍວິທີຕ່າງໆເຊັ່ນ:
  - ໃສ່ຕາໜ່າງກັນຍຸງທີ່ປ່ອງຢ້ຽມ ແລະ ປະຕູເຮືອນ
  - ນຸ່ງເສື້ອແຂນຍາວ, ໂສ້ງຂາຍາວ ເວລານອນ
  - ຈູດຢາອູດຍຸງ
  - ທາຢາກັນຍຸງ
- ຮັກສາສະພາບແວດລ້ອມອ້ອມເຮືອນໃຫ້ສະອາດຢູ່ສະເໝີ ແລະ ບໍ່ໃຫ້ມີນໍ້າຂັງໃນບໍລິເວນບ້ານ ຫຼື ບໍລິເວນໃກ້ຄຽງ.



**International Federation of**
**Red Cross and Red Crescent Societies**
South-East Asia regional delegation

Community Safety and Resilience Unit
Ocean Tower I, 170/11-12 Sukhumvit soi 16, Klong-toey
10110 Bangkok, Thailand
T: +662 661 8201 F: +662 661 9322
E: thailand.regionaloffice@ifrc.org

Norwegian **Red Cross**

International Federation
of Red Cross and Red Crescent Societies
www.ifrc.org Saving lives, changing minds.